ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 111 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາ**
**ຂອງກົດໝາຍວ່າດ້ວຍສານປະຊາຊົນ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 54/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 08/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 54 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສານປະຊາຊົນ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 6 ກໍລະກົດ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 7 ກໍລະກົດ 2022.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 22 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍ

## ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ເພື່ອໃຫ້ຈະແຈ້ງ ແລະ ຮັບປະກັນການຈັດຕັ້ງປະຕິບັດວຽກງານຂອງສານປະຊາຊົນ ໃຫ້ມີຄວາມຄ່ອງຕົວ, ສອດຄ່ອງກັບສະພາບການຕົວຈິງ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ.

**ມາດຕາ 2 ມາດຕາຂອງກົດໝາຍ ທີ່ມີການປັບປຸງ**

ເນື້ອໃນມາດຕາຂອງກົດໝາຍ ທີ່ມີການປັບປຸງ ມີ ດັ່ງນີ້:

**1. ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານສານປະຊາຊົນ** ໝາຍເຖິງ ປະທານ, ຮອງປະທານ, ຫົວໜ້າ, ຮອງຫົວໜ້າຄະນະສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການ ແລະ ພະນັກງານບໍລິຫານຂອງສານປະຊາຊົນ;

2. **ຄຳຕົກລົງຂອງສານ** ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;

3. **ຄຳສັ່ງຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ກ່ຽວກັບການດຳເນີນຄະດີ ເຊັ່ນ ຄຳສັ່ງຍຶດຊັບ ຫຼື ອາຍັດຊັບ, ຄຳສັ່ງຊັດມ້ຽນຄະດີ, ຄຳສັ່ງພາຕົວ, ຄຳສັ່ງຈັບຕົວ, ຄຳສັ່ງປ່ອຍຕົວພາງ, ຄຳສັ່ງໃຫ້ປະຕິບັດຜົນຂອງການໄກ່ເກ່ຍ ແລະ ຄຳສັ່ງອື່ນ;

4. **ຄຳຊີ້ຂາດຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ກ່ຽວກັບການຊີ້ຂາດສິດອຳນາດຂອງສານ, ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະນາ, ຄຳຕັດສິນປະຫານຊີວິດ ແລະ ຄຳຊີ້ຂາດອື່ນ;

5. **ຄຳຕັດສິນຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ທີ່ຕັດສິນເປັນຂັ້ນຕົ້ນ;

6. **ຄຳພິພາກສາຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ທີ່ຕັດສິນເປັນຂັ້ນອຸທອນ ແລະ ຂັ້ນລົບລ້າງ;

7. **ຄູ່ຄວາມ** ໝາຍເຖິງ ໂຈດ, ຈຳເລີຍໃນຄະດີ ແລະ ຄູ່ກໍລະນີໃນຄະດີປົກຄອງ ລວມທັງບຸກຄົນທີສາມ;

8. **ຜູ້ປົກປ້ອງອື່ນ** ໝາຍເຖິງ ທະນາຍຄວາມ, ຜູ້ຕາງໜ້າອົງການຈັດຕັ້ງ, ຜົວ ຫຼື ເມຍ, ພໍ່, ແມ່, ຜູ້ປົກຄອງ ຫຼື ຍາດໃກ້ຊິດ ທີ່ເຂົ້າຮ່ວມໃນການດຳເນີນຄະດີ ຕາມການມອບໝາຍ ຫຼື ຕາມກົດໝາຍ ເພື່ອປົກ

ປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ;

9. **ທະນາຍຄວາມ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ຕາມກົດໝາຍ;

10. **ໝາຍຮຽກຂອງສານ** ໝາຍເຖິງ ໜັງສືຂອງສານທີ່ຮຽກ ໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ແລະ ຜູ້ເຂົ້າຮ່ວມອື່ນ ໃນການດຳເນີນຄະດີເຂົ້າມາສານ ຕາມວັນເວລາ ແລະ ສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນໝາຍຮຽກ;

11. **ໝາຍເຊີນຂອງສານ** ໝາຍເຖິງ ໜັງສືຂອງສານ ທີ່ເຊີນຫົວໜ້າອົງການໄອຍະການປະຊາຊົນ, ອົງການຈັດຕັ້ງ, ວິສາຫະກິດ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ແລະ ຜູ້ແປພາສາ ເຂົ້າມາສານ ຕາມວັນເວລາ ແລະ ສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນໝາຍເຊີນ;

12. **ປະເພນີສານ** ໝາຍເຖິງ ຄຳພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາໃດໜຶ່ງໃນຄະດີອາຍາ ຊຶ່ງກົດໝາຍກຳນົດໄວ້ບໍ່ຊັດເຈນ; ຄະດີ ແພ່ງ, ການຄ້າ, ແຮງງານ, ປົກຄອງ, ຄອບຄົວ ແລະ ເດັກ ຊຶ່ງກົດໝາຍ ບໍ່ໄດ້ກຳນົດ ຫຼື ໄດ້ກຳນົດໄວ້ແຕ່ບໍ່ຈະແຈ້ງ ເພື່ອເປັນບ່ອນອີງໃຫ້ສານປະຊາຊົນທຸກຂັ້ນໄດ້ປະຕິບັດຕາມ;

13. **ຈ່າສານ** ໝາຍເຖິງ ພະນັກງານຂອງສານປະຊາຊົນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ເຮັດວຽກຊ່ວຍຄະນະສານໃນການປະກອບ ແລະ ຄຸ້ມຄອງ ສຳນວນຄະດີ, ບັນທຶກຄຳໃຫ້ການ, ກະກຽມ ແລະ ບັນທຶກປຶ້ມປະຊຸມສານ ແລະ ວຽກງານອື່ນ ຕາມການມອບໝາຍຂອງຄະນະສານ;

14. **ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ** ໝາຍເຖິງ ຄຳຕັດສິນ, ຄຳພິພາກສາຂອງສານ ຊຶ່ງໂຈດ, ຈຳເລີຍ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ, ຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ, ຄຳພິພາກສາຂັ້ນລົບລ້າງຂອງສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ;

15. **ການຍົກຍ້າຍ** ໝາຍເຖິງ ການຍ້າຍໄປຮັບໜ້າທີ່ໃໝ່ ຢູ່ນອກລະບົບສານ;

16. **ການສັບປ່ຽນບ່ອນປະຈຳການ** ໝາຍເຖິງ ການປ່ຽນບ່ອນປະຈຳການ ຢູ່ພາຍໃນລະບົບສານປະຊາຊົນ.

**2. ມາດຕາ 21 ສິດ ແລະ ໜ້າທີ່ຂອງສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ເປັນຂັ້ນລົບລ້າງທາງດ້ານກົດໝາຍຄະດີ ທີ່ສານປະຊາຊົນພາກ ແລະ ສານທະຫານຂັ້ນສູງ ໄດ້ພິຈາລະນາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນ ແລະ ອົງການໄອຍະການທະຫານ;

2. ພິຈາລະນາ ເປັນຂັ້ນຮື້ຟື້ນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

3. ແນະນຳທາງດ້ານປະເພນີສານ, ອະທິບາຍເນື້ອໃນຂອງກົດໝາຍໃນຂົງເຂດທີ່ຕົນຮັບຜິດຊອບໃຫ້ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;

4. ແນະນຳກວດກາ ຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບທາງດ້ານກົດໝາຍ ໃນການດຳເນີນຄະດີ ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;

5. ຄົ້ນຄວ້າກ່ຽວກັບສິດອຳນາດຂອງສານ ໃນທົ່ວປະເທດ;

6. ພິຈາລະນາ ອອກຄຳຊີ້ຂາດ ກ່ຽວກັບຄຳຕັດສິນ, ຄຳພິພາກສາ ປະຫານຊີວິດ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ;

7. ຊີ້ນຳວຽກງານຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ, ນິຕິກຳອື່ນ ແລະ ສະເໜີການຕີຄວາມໝາຍກົດໝາຍ ຕໍ່ຄະນະປະຈຳສະພາແຫ່ງຊາດ;

8. ພິຈາລະນາ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ, ຫົວໜ້າ, ຮອງຫົວໜ້າຄະນະສານຂອງສານປະຊາຊົນທ້ອງຖິ່ນ;

9. ພິຈາລະນາ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານບໍລິຫານຂອງສານປະຊາຊົນ;

10. ພິຈາລະນາ ສັບປ່ຽນບ່ອນປະຈຳການຂອງພະນັກງານສານປະຊາຊົນ;

11. ເຮັດບົດອະທິບາຍ ແລະ ອອກຄຳແນະນຳ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ເພື່ອໃຫ້ສານປະຊາຊົນ ແລະ ສານທະຫານ ເຂົ້າໃຈ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ;

12. ຊີ້ນຳ ແລະ ຄຸ້ມຄອງ ສານປະຊາຊົນພາກ, ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານເດັກ ແລະ ສານປະຊາຊົນເຂດ ທາງດ້ານການຈັດຕັ້ງ, ບໍລິຫານ ແລະ ກວດກາ ທາງດ້ານວິຊາສະເພາະຂອງສານດັ່ງກ່າວ;

13. ວາງມາດຕະການອັນຈຳເປັນ ກ່ຽວກັບບັນຫາການຈັດຕັ້ງ, ການປັບປຸງ ແລະ ການບໍລິຫານສານ;

14. ຊີ້ນຳວຽກງານສ້າງພະນັກງານສານປະຊາຊົນ ເປັນຕົ້ນ ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ;

15. ກວດກາການຈັດຕັ້ງປະຕິບັດວຽກງານຂອງສານ, ຄົ້ນຄວ້າ ແລະ ສັງລວມພາກປະຕິບັດຂອງສານ, ຈັດຕັ້ງວຽກງານສະຖິຕິສານ, ເຮັດບົດວິໄຈສະຖິຕິສານ ແລະ ວຽກງານອື່ນຂອງສານ;

16. ຄົ້ນຄວ້າ, ນຳສະເໜີ ແລະ ຕົກລົງໃຫ້ນາມມະຍົດຕຳແໜ່ງວິຊາການຂອງຜູ້ພິພາກສາ ແລະ ພະນັກງານອື່ນຂອງສານປະຊາຊົນ;

17. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍ;

18. ສະຫຼຸບ, ລາຍງານການເຄື່ອນໄຫວ ແລະ ການປະຕິບັດໜ້າທີ່ຂອງຕົນຕໍ່ສະພາແຫ່ງຊາດ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**3. ມາດຕາ 37 ການເລືອກຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຫຼື ສັບປ່ຽນບ່ອນປະຈຳການ**

ປະທານສານປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ ແລະ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ຮອງປະທານສານປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຜູ້ພິພາກສາ, ຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ປະທານ, ຮອງປະທານ ສານປະຊາຊົນພາກ, ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານປະຊາຊົນເຂດ ແລະ ຜູ້ພິພາກສາຂອງສານປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຮອງຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ, ຫົວໜ້າ, ຮອງຫົວໜ້າຄະນະສານຂອງສານປະຊາຊົນທ້ອງຖິ່ນ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານສານປະຊາຊົນສູງສຸດ.

ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານບໍລິຫານຂອງສານປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານສານປະຊາຊົນສູງສຸດ.

ຫົວໜ້າ, ຮອງຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ; ປະທານ, ຮອງປະທານ ສານປະຊາຊົນພາກ, ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານປະຊາຊົນເຂດ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານອື່ນຂອງສານປະຊາຊົນ ເປັນຕົ້ນ ຫົວໜ້າ, ຮອງຫົວໜ້າກົມ, ສະຖາບັນ, ຫ້ອງການ, ພະແນກ, ຂະແໜງ, ໜ່ວຍງານຂອງສານປະຊາຊົນ ຖືກສັບປ່ຽນບ່ອນປະຈໍາການ ໂດຍປະທານສານປະຊາຊົນສູງສຸດ.

**4. ມາດຕາ 38 ສິດ ແລະ ໜ້າທີ່ຂອງປະທານສານປະຊາຊົນສູງສຸດ**

ປະທານສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານໃນທຸກຄະນະສານຕັດສິນຂອງສານປະຊາຊົນສູງສຸດ;

2. ນໍາພາ ຊີ້ນໍາວຽກງານຂອງສານປະຊາຊົນສູງສຸດ, ສະພາຜູ້ພິພາກສາ, ກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ຮຽກໂຮມ ກອງປະຊຸມສະພາຜູ້ພິພາກສາ ແລະ ກອງປະຊຸມໃຫຍ່ຜູ້ພິພາກສາ;

3. ລາຍງານ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສານປະຊາຊົນ ແລະ ສານທະຫານ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈໍາສະພາແຫ່ງຊາດ ໃນເວລາສະພາແຫ່ງຊາດ ບໍ່ໄດ້ເປີດປະຊຸມ;

4. ສະເໜີໃຫ້ປະທານປະເທດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງປະທານສານປະຊາຊົນສູງສຸດ;

5. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ສະມາຊິກສະພາຜູ້ພິພາກສາ ຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ;

6. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ ຕໍ່ຄະນະປະຈໍາສະພາແຫ່ງຊາດ ເພື່ອພິຈາລະນາ;

7. ກໍານົດຈໍານວນຜູ້ພິພາກສາຂອງສານປະຊາຊົນທຸກຂັ້ນ ແລະ ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ ເພື່ອໃຫ້ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;

8. ກໍານົດຂອບເຂດຄວາມຮັບຜິດຊອບ ແລະ ສະຖານທີ່ຕັ້ງຂອງສານປະຊາຊົນເຂດ ແລະ ສານປະຊາຊົນພາກ;

9. ອອກຄໍາແນະນໍາ, ບົດອະທິບາຍກົດໝາຍ ແລະ ການດໍາເນີນຄະດີ ທີ່ຢູ່ໃນຄວາມຮັບຜິດຊອບຂອງສານປະຊາຊົນ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

10. ອອກຄໍາຊີ້ຂາດ ກ່ຽວກັບຄໍາຕັດສິນ, ຄໍາພິພາກສາ ປະຫານຊີວິດ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ;

11. ອອກຄໍາຊີ້ຂາດກ່ຽວກັບສິດອໍານາດຂອງສານໃນທົ່ວປະເທດ;

12. ຊີ້ນໍາວຽກງານຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ, ນິຕິກໍາອື່ນ ແລະ ສະເໜີຄະນະປະຈໍາສະພາແຫ່ງຊາດ ຕີຄວາມໝາຍກົດໝາຍ;

13. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຮອງຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ, ຫົວໜ້າ, ຮອງຫົວໜ້າ ຄະນະສານຂອງສານປະຊາຊົນທ້ອງຖິ່ນ;

14. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າ, ຮອງຫົວໜ້າກົມ, ສະຖາບັນ, ຫ້ອງການ, ພະແນກ, ຂະແໜງ, ໜ່ວຍງານ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ຂອງສານປະຊາຊົນ;

15. ສັບປ່ຽນບ່ອນປະຈໍາການ ຂອງຫົວໜ້າ, ຮອງຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ; ປະທານ, ຮອງປະທານ ສານປະຊາຊົນພາກ, ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານປະຊາຊົນເຂດ, ຜູ້ພິ

ພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານອື່ນຂອງສານປະຊາຊົນ ເປັນຕົ້ນ ຫົວໜ້າ, ຮອງຫົວໜ້າ ກົມ, ສະຖາບັນ, ຫ້ອງການ, ພະແນກ, ຂະແໜງ, ໜ່ວຍງານຂອງສານປະຊາຊົນ ທົ່ວປະເທດ;

16. ກໍານົດກົງຈັກບໍລິຫານຂອງສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ;

17. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 3 ການປ່ຽນແທນເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ປ່ຽນແທນເນື້ອໃນມາດຕາ 3, 21, 37 ແລະ ມາດຕາ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບເລກທີ 22/ສພຊ, ລົງວັນທີ 10 ພຶດສະພາ 2017.

**ມາດຕາ 4 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 25 ສິງຫາ 2022 ພາຍຫຼັງປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ